ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ.......34......./ຖວທ

ນະຄອນຫຼວງວຽງຈັນ, ວັນທີ.....29 ກໍລະກົດ 2024.....

# ຄຳແນະນຳ
# ວ່າດ້ວຍການລົງສຳຫຼວດ, ກຳນົດຂອບເຂດທີ່ດິນວັດທະນະທຳ ໃນຂອບເຂດທົ່ວປະເທດ

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ) ສະບັບເລກທີ 11/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຂອງສະພາແຫ່ງຊາດ ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ສະບັບເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018.
- ອີງຕາມ ໜັງສືສະເໜີຂອງກົມມໍລະດົກ ສະບັບເລກທີ 125/ມດ, ລົງວັນທີ 5 ກຸມພາ 2024.

ເພື່ອເປັນການຜັນຂະຫຍາຍ ພາກທີ II, ໝວດທີ 1, ມາດຕາ 10, ຂອງກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 16 ພະຈິກ 2021.

## ລັດຖະມົນຕີ ອອກຄຳແນະນຳ:

## I. ຈຸດປະສົງ

ຄຳແນະນຳ ສະບັບນີ້ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 16 ພະຈິກ 2021 ເປັນບ່ອນອີງໃນການການລົງສຳຫຼວດ, ກຳນົດຂອບເຂດທີ່ດິນວັດທະນະທຳ ໃນຂອບເຂດທົ່ວປະເທດ, ເພື່ອສະດວກໃນການຕິດຕາມ, ກວດກາ, ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍທີ່ດິນວັດທະນະທຳໃຫ້ມີປະສິດທິຜົນ ແລະ ເປັນເອກະພາບ,ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ໃນຂອບເຂດທົ່ວປະເທດ.

## II. ແນະນຳການຈັດຕັ້ງປະຕິບັດບາງເນື້ອໃນ

**1.** ພາກທີ II, ໝວດທີ 1, ມາດຕາ 10 ປະເພດມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ຂໍ້ທີ 1, ປະເພດມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ທີ່ເປັນວັດຖຸ ປະກອບມີ ຄື:

- ທີ່ດິນມໍລະດົກ;
- ທີ່ດິນຮ່ອງຮອຍປະຫວັດສາດ;
- ທີ່ດິນປູຊະນີຍະສະຖານ.

### 1.1 ທີ່ດິນມໍລະດົກ

ທີ່ດິນມໍລະດົກ ແມ່ນ ທີ່ດິນທີ່ຕິດພັນກັບແຫຼ່ງມໍລະດົກວັດທະນະທຳ, ປະຫວັດສາດ ຊຶ່ງ ປະກອບມີ ຄື ດັ່ງນີ້: ໜ

ກ. ທີ່ດິນບູຮານສະຖານ;

ຂ. ທີ່ດິນມໍລະດົກສະຖານ;

ຄ. ທີ່ດິນສາສະໜາສະຖານ;

ງ. ທີ່ດິນແຫຼ່ງບູຮານວິທະຍາ.

**1.2 ທີ່ດິນຮ່ອງຮອຍປະຫວັດສາດ**

ທີ່ດິນຮ່ອງຮອຍປະຫວັດສາດ ປະກອບມີ ຄື ດັ່ງນີ້:

ກ. ທີ່ດິນແຫຼ່ງບູຮານສະຖານ: ແຫຼ່ງບູຮານສະຖານ ແມ່ນ ບ່ອນທີ່ເປັນແຫຼ່ງທີ່ຢູ່ອາໄສຂອງຄົນ ຫຼື ມະນຸດບູຮານສ້າງຂຶ້ນ ຫຼື ເປັນບ່ອນທີ່ມີການດຳລົງຊີວິດອາໄສຢູ່ໃນເມື່ອກ່ອນ.

ຂ. ທີ່ດິນສະຖານທີ່ປະຫວັດສາດ: ສະຖານທີ່ປະຫວັດສາດ ແມ່ນ ບ່ອນທີ່ເປັນທີ່ໝັ້ນຂອງການຕໍ່ສູ້ກູ້ຊາດ ຫຼື ບ່ອນເປັນທີ່ຕັ້ງຂອງກຳລັງປະກອບອາວຸດຂອງທະຫານໃນເມື່ອກ່ອນ.

**1.3 ທີ່ດິນປູຊະນີຍະສະຖານ**

ທີ່ດິນປູຊະນີຍະສະຖານ ແມ່ນ ສະຖານທີ່ເຄົາລົບ, ສັກກາລະບູຊາ ຂອງປະຊາຊົນລາວບັນດາເຜົ່າ ທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ, ຄວາມເຊື່ອຖືຂອງບັນດາເຜົ່າ ຊຶ່ງປະກອບມີ ດັ່ງນີ້:

ກ. ທີ່ດິນຫໍຫຼັກເມືອງ;

ຂ. ທີ່ດິນຫໍບ້ານ;

ຄ. ທີ່ດິນມະເຫສັກ ຫຼື ທີ່ດິນຫຼັກບ້ານ;

ງ. ທີ່ດິນລວມບ້ານ;

ຈ. ທີ່ດິນປ່າຊ່າບ້ານ;

ສ, ທີ່ດິນອື່ນ.

**2. ການສຳຫຼວດທີ່ດິນວັດທະນະທຳ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການ ສົມທົບກັບ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຳຫຼວດທີ່ດິນວັດທະນະທຳດ້ວຍການມີສ່ວນຮ່ວມຂອງປະຊາຊົນໃນທ້ອງຖິ່ນທີ່ກ່ຽວຂ້ອງ.

**3. ການກຳນົດຂອບເຂດທີ່ດິນວັດທະນະທຳ**

ການກຳນົດຂອບເຂດທີ່ດິນວັດທະນະທຳ ແມ່ນ ອີງໃສ່ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ສະບັບປັບປຸງ ເລກທີ 11/ສພຊ, ລົງວັນທີ 16 ພະຈິກ 2021. ພາກທີ IV, ໝວດທີ 3, ມາດຕາ 46 ເຂດມໍລະດົກສະຖານ ໄດ້ແບ່ງອອກເປັນ ສີ່ ເຂດດັ່ງນີ້:

1. ເຂດ 1 ແມ່ນ ເຂດໃຈກາງ ເປັນສະຖານທີ່ຕັ້ງຂອງມໍລະດົກ ຊຶ່ງຕ້ອງຮັກສາສະພາບເດີມໄວ້ ແລະ ບໍ່ໃຫ້ມີການປຸກສ້າງ;

2. ເຂດ 2 ແມ່ນ ເຂດອ້ອມຮອບເຂດໃຈກາງ ຊຶ່ງອະນຸຍາດໃຫ້ດຳເນີນກິດຈະກຳ ຈຳນວນໜຶ່ງ ເພື່ອສົ່ງເສີມຄຸນຄ່າຂອງເຂດ 1 ແຕ່ບໍ່ໃຫ້ກໍ່ຄວາມເສຍຫາຍຕໍ່ສະພາບແວດລ້ອມຂອງ ເຂດນັ້ນ;

3. ເຂດ 3 ແມ່ນ ເຂດກັນຊົນ, ເຂດປ້ອງກັນ ຊຶ່ງອະນຸຍາດໃຫ້ມີການປຸກສ້າງ ເພື່ອປ້ອງກັນ ແລະ ຮັບໃຊ້ໃຫ້ແກ່ ເຂດ 1 , ເຂດ 2 ເພື່ອຮອງຮັບການພັດທະນາ, ການທ່ອງທ່ຽວ ແລະ ການຂົນສົ່ງ;

4. ເຂດ 4 ແມ່ນ ເຂດຄຸ້ມຄອງ ຊຶ່ງອະນຸຍາດໃຫ້ມີການປຸກສ້າງ ເພື່ອຮັບໃຊ້ໃຫ້ແກ່ເຂດ 1, ເຂດ 2 ແລະ ເຂດ 3 ເພື່ອ ຂະຫຍາຍຕົວເມືອງ ແລະ ຮອງຮັບການທ່ອງທ່ຽວ.

## III. ການລົງສຳຫຼວດທີ່ດິນວັດທະນະທຳ

ການລົງສຳຫຼວດ, ກຳນົດຂອບເຂດທີ່ດິນວັດທະນະທຳ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການກຳນົດຈຸດຂອບເຂດທີ່ດິນ;
2. ການວັດແທກໄລຍະຄວາມກວ້າງ, ຄວາມຍາວ ຕາມເນື້ອທີ່ດິນວັດທະນະທຳ;
3. ການສ້າງແຜນທີ່, ກຳນົດເນື້ອທີ່ ທີ່ດິນແຕ່ລະແຫ່ງ;
4. ແຜນທີ່ປະກອບເປັນເອກະສານຊ້ອນທ້າຍ.

- **ອຸປະກອນຮັບໃຊ້ທາງວິຊາການ**

  ກ. ແຜນທີ່ພູມິປະເທດ;

  ຂ. ແຜນທີ່ແຂວງ, ເມືອງ ແລະ ບ້ານຕັ້ງຢູ່;

  ຄ. ເຄື່ອງຈີພີເອສ (GPS);

  ງ. ແມັດຍາວ 50-100 ແມັດ;

  ຈ. ກອງຖ່າຍຮູບ;

  ສ. ອຸປະກອນອື່ນໆ.

- **ການເກັບກຳຂໍ້ມູນປະກອບພື້ນທີ່ ທີ່ດິນວັດທະນະທຳ**

  ສຳລັບແບບຟອມຕາຕະລາງເກັບກຳຂໍ້ມູນປະກອບພື້ນທີ່ ທີ່ດິນວັດທະນະທຳ ກົມມໍລະດົກ ມີ ລົງຄົວອາໂຄດສະໜອງໃຫ້ຄື: (ແບບຟອມຕາຕະລາງຄັດຕິດມາພ້ອມນີ້).

- **ການສັງລວມຂໍ້ມູນທີ່ດິນວັດທະນະທຳ**

  ກ. ແຜນທີ່ ແຫຼ່ງທີ່ດິນວັດທະນະທຳ ທີ່ໄດ້ກຳນົດສຳເລັດ;

  ຂ. ຕາຕະລາງເກັບກຳຂໍ້ມູນ;

  ຄ. ເອກະສານອ້າງອີງຊ້ອນທ້າຍ;

  ງ. ຮູບພາບປະກອບ ອື່ນໆ

## IV. ການສິ້ນສຸດ, ລົງສຳຫຼວດທີ່ດິນວັດທະນະທຳ

ການສິ້ນສຸດ,ລົງສຳຫຼວດທີ່ດິນວັດທະນະທຳຄະນະຮັບຜິດຊອບຕ້ອງປະຕິບັດ ດັ່ງນີ້:

- ຄະນະຮັບຜິດຊອບລົງສຳຫຼວດ, ເກັບກຳຂໍ້ມູນ ຂອບເຂດທີ່ດິນວັດທະນະທຳ ເປັນຜູ້ສັງລວມຂໍ້ມູນ ແລະ ນຳສະເໜີ ຕໍ່ພາກສ່ວນ ແລະ ຂະແໜງການກ່ຽວຂ້ອງ ເຊັ່ນ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຢັ້ງຢືນດ້ານຫຼັກການ, ລະບຽບການ ແລະ ກົດໝາຍ. ໂດຍຜ່ານຄະນະຮັບຜິດຊອບກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ດ້ວຍການຢັ້ງຢືນ ຈາກຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ, ນະຄອນ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງຕາມລຳດັບ.
- ພາຍຫຼັງການຢັ້ງຢືນຈາກຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການກ່ຽວຂ້ອງທັງສູນກາງ, ທ້ອງຖິ່ນ ແລະ ຕາມຂັ້ນຕອນການນຳສະເໜີຂໍອະນຸມັດເອກະສານຢັ້ງຢືນການຄຸ້ມຄອງທີ່ດິນວັດທະນະທຳ ໂດຍ ທ່ານ ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ໄດ້ກຳນົດໄວ້ໃນກົດໝາຍກ່ຽວຂ້ອງ. ( ປະກອບມີເອກະສານກ່ຽວຂ້ອງຊ້ອນທ້າຍ )

## V. ການຢັ້ງຢືນ-ຮັບຮອງ, ການຄຸ້ມຄອງນຳໃຊ້ທີ່ດິນແຕ່ລະປະເພດ

1. ການຢັ້ງຢືນ-ຮັບຮອງ ແຫຼ່ງຂໍ້ມູນທີ່ດິນວັດທະນະທຳ ແມ່ນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ

ທ່ອງທ່ຽວ ເປັນເຈົ້າການສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

2. ການຄຸ້ມຄອງ, ການນຳໃຊ້ທີ່ດິນແຕ່ລະປະເພດ ແມ່ນ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019. ພາກທີ IV, ມາດຕາ 31 ປັບປຸງ, ຂໍ້ທີ 6. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄຸ້ມຄອງນຳໃຊ້ທີ່ດິນວັດທະນະທຳ ລວມທັງທີ່ດິນບໍລິເວນນ້ຳ ທີ່ຢູ່ໃນພື້ນທີ່ ທີ່ດິນປະເພດດັ່ງກ່າວ.

## VI. ການວາງແຜນນຳໃຊ້ ການປົກປັກຮັກສາ ທີ່ດິນວັດທະນະທຳ

- ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ວາງແຜນນຳໃຊ້ທີ່ດິນວັດທະນະທຳໃຫ້ສອດຄ່ອງກັບແຜນແມ່ບົດຂອງການຈັດສັນທີ່ດິນ ແລະ ແຜນຍຸດທະສາດການຄຸ້ມຄອງ ທີ່ດິນວັດທະນະທຳ.
- ທີ່ດິນວັດທະນະທຳຕ້ອງໄດ້ຮັບການປົກປັກຮັກສາດ້ວຍການກຳນົດຂອບເຂດພື້ນທີ່ດິນສະຫງວນ ແລະ ອະນຸລັກທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ, ວາງລະບຽບການ ແລະ ມາດຕະການປົກປັກຮັກສາທີ່ດິນດັ່ງກ່າວໂດຍສອດຄ່ອງກັບແຜນແມ່ບົດຂອງການຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງທ້ອງຖິ່ນ ແຕ່ລະໄລຍະ.

## VII. ການຈັດຕັ້ງປະຕິບັດ

- ມອບໃຫ້ບັນດາກະຊວງ, ອົງການຈັດຕັ້ງລັດຢູ່ສູນກາງ, ທ້ອງຖິ່ນ ຈັດຕັ້ງເຜີຍແຜ່ ແລະນຳພາ-ຊີ້ນຳຂະແໜງການກ່ຽວຂ້ອງຂອງຕົນ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
- ການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາໃດ ບໍ່ສອດຄ່ອງ, ຈະແຈ້ງ ຫຼື ມີຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດໃຫ້ຮີບຮ້ອນລາຍງານ, ປະສານສົມທົບຄືນກັບກົມມໍລະດົກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຮ່ວມກັນຄົ້ນຄວ້າ, ປັບປຸງ ແລະ ແກ້ໄຂໃຫ້ທັນເວລາ.
- ຄຳແນະນຳ ສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ວັນສີ ກິວມົວ

**ກົມມໍລະດົກ**
ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ບ້ານວັດນາກ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ 021 315453, 020 28081056, 020 91108139
ຕູ້.ປນ 122, ຖະໜົນທ່າເດື່ອ